**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 1500 /ຟຟລ.ຫຟຟລ

ນະຄອນຫລວງວຽງຈັນ, ວັນທີ: 13 APR 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ຂໍຖືເປັນກຽດເຊີນບັນດາບໍລິສັດ/ຫ້າງຮ້ານ ທີ່ສົນໃຈ ແລະ ສາມາດປະຕິບັດຕາມເງື່ອນໄຂໄດ້ ເຂົ້າຮ່ວມປະມູນ ນໍາໃຊ້ພື້ນທີ່ຫ້ອງອາຫານ (ຈໍານວນ 03 ລັອກ/03 ຮ້ານ) ແລະ ໂຊນຮ້ານເຄື່ອງດື່ມ (ຈໍານວນ 01 ລັອກ/01 ຮ້ານ) ທີ່ຊັ້ນ 01 ສໍານັກງານໃຫຍ່ ຟຟລ ເພື່ອເປີດໃຫ້ເຊົ່າພື້ນທີ່ເຮັດເປັນຮ້ານອາຫານ ເພື່ອບໍລິການໃຫ້ພະນັກງານ ຟຟລ ແລະ ແຂກທີ່ມາພົວພັນວຽກພາຍໃນ ຟຟລ.
2. ບໍລິສັດ/ຫ້າງຮ້ານ ໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນ ຊື້ເອກະສານປະມູນໄດ້ທີ່ ລັດວິສາຫະກິດໄຟຟ້າລາວ (ສໍານັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: .໑໔./.04./2026 ໄປຈົນເຖິງ .໑໑./.05./2026.ໃນລາຄາ 100,000 ກີບ/ຊອງ (ລວມ ອມພ 10%) ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ).
3. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: ໑໑./.05./2026 ທີ່ຫ້ອງປະຊຸມຊັ້ນ 08 ຫ້ອງ 801 ສໍານັກງານໃຫຍ່ ຟຟລ. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກໍານົດໃວ້ ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ ແລະ ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ແລະ ຕົວແທນ ຂອງຜູ້ເຂົ້າຮ່ວມແຂ່ງ ຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.
4. ຜູ້ເຂົ້າຮ່ວມປະມູນສາມາດ ເລືອກເຂົ້າຮ່ວມປະມູນໄດ້ພຽງ 01ຫ້ອງ (ລັອກ) ເທົ່ານັ້ນ, ຈະບໍ່ອະນຸຍາດໃຫ້ຜູ້ເຂົ້າຮ່ວມປະມູນທີ່ມີສາຍພົວພັນດຽວກັນ ຫລື ເຄືອຍາດດຽວກັນເຂົ້າຮ່ວມ.

**ຜູ້ອໍານວຍການໃຫຍ່**

ກະຊວງ ອຸດສາຫະກໍາ ແລະ ການຄ້າ
ບໍລິສັດລັດ
ວິສາຫະກິດໄຟຟ້າລາວ
ELECTRICITE DU LAOS
ນະຄອນ ຫຼວງ ວຽງຈັນ

**ປອ. ອາຄົມເດດ ວົງໄຊ**
**ຜູ້ອໍານວຍການໃຫຍ່**

ຖະໜົນມິດຕະພາບລາວ-ໄທ,ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edl.com.la

扫描全能王 创建